ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 028 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 08 ມັງກອນ 2020

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍຮູບເງົາ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 31/ສພຊ, ລົງວັນທີ 27 ພະຈິກ 2019 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຮູບເງົາ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 33/ຄປຈ, ລົງວັນທີ 12 ທັນວາ 2019.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍຮູບເງົາ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 31 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 27 / 11 / 19

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຮຸບເງິາ

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຮຸບເງິາ ໃນວາລະກອງປະຊຸມ ຄັ້ງວັນທີ 27 ພະຈິກ 2019.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຮຸບເງິາ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 76 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 27 ພະຈິກ 2019

# ກົດໝາຍວ່າດ້ວຍຮູບເງົາ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາວຽກງານຮູບເງົາ ເພື່ອໃຫ້ວຽກງານດັ່ງກ່າວເຄື່ອນໄຫວເປັນລະບົບ, ມີປະສິດທິພາບ, ປະສິດທິຜົນ ແນໃສ່ຮັບປະກັນໃຫ້ຜະລິດຕະພັນຮູບເງົາມີທັງ ປະລິມານ ແລະ ຄຸນນະພາບ ມີ ລັກສະນະຊາດ, ລັກສະນະມະຫາຊົນ ແລະ ລັກສະນະກ້າວໜ້າ, ເສີມຂະຫຍາຍຫົວຄິດປະດິດສ້າງຂອງປະຊາຊົນລາວບັນດາເຜົ່າເຂົ້າໃນການຟື້ນຟູ, ພັດທະນາ ແລະ ການເຜີຍແຜ່ຮູບເງົາ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ຮູບເງົາ**

ຮູບເງົາ ແມ່ນ ຜະລິດຕະພັນທີ່ສັງລວມດ້ານສິລະປະ ແລະ ເປັນສື່ໂຄສະນາ ຊຶ່ງສະແດງໃຫ້ເຫັນເປັນພາບເຄື່ອນໄຫວທີ່ມີສຽງ ຫຼື ບໍ່ມີສຽງ ໂດຍໄດ້ບັນທຶກໃສ່ຟີມ, ກາແຊັດວີດີໂອ, ແຜ່ນວີຊີດີ, ແຜ່ນດີວີດີ ຫຼື ວັດຖຸບັນທຶກແບບອື່ນ ເພື່ອເຜີຍແຜ່ຕໍ່ມວນຊົນໂດຍຜ່ານອຸປະກອນເຕັກນິກ ແລະ ພາຫະນະອື່ນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄວາມຊົງຈຳຂອງໂລກ (Memory of the World)** ໝາຍເຖິງ ເຫດການໃດໜຶ່ງທີ່ເກີດຂຶ້ນ ແລະ ຖືກບັນທຶກໄວ້ ເພື່ອໃຫ້ຄົນຮຸ່ນຫຼັງໄດ້ຮັບຮູ້ ຊຶ່ງໄດ້ຈັດເປັນສາມລະດັບ ຄື ຄວາມຊົງຈຳຂອງໂລກລະດັບຊາດ, ພາກພື້ນ, ລະດັບໂລກ ໂດຍມີການຂຶ້ນທະບຽນ, ອະນຸລັກ ແລະ ປົກປັກຮັກສາວຽກງານປະຫວັດສາດ, ວັດທະນະທຳ ແລະ ທຳມະຊາດ ທີ່ໂດດເດັ່ນ;

2. **ບົດຮູບເງົາ** ໝາຍເຖິງ ບົດເລື່ອງທີ່ຂຽນຂຶ້ນໂດຍກົງ ຫຼື ບົດເລື່ອງທີ່ດັດແປງມາຈາກບົດເລື່ອງຂອງຜູ້ອື່ນ ໂດຍໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດ;

3. **ບົດຖ່າຍທຳຮູບເງົາ** ໝາຍເຖິງ ບົດຂຽນ ແລະ ການປະດິດສ້າງ ຊຶ່ງປະກອບດ້ວຍ ຕອນ, ສາກ, ພາບ ແລະ ອື່ນໆ;

4. **ຕອນ** ໝາຍເຖິງ ເຫດການໜຶ່ງຂອງເລື່ອງທີ່ເກີດຂຶ້ນໃນສະຖານທີ່ໜຶ່ງ ຊຶ່ງປະກອບມີ ຫຼາຍໄລຍະເວລາ, ຫຼາຍສາກ ແລະ ຫຼາຍພາບ;

5. **ສາກ** ໝາຍເຖິງ ເຫດການໜຶ່ງຂອງເລື່ອງທີ່ເກີດຂຶ້ນໃນສະຖານທີ່ໜຶ່ງ ໃນໄລຍະເວລາໃດໜຶ່ງ;

6. **ພາບ** ໝາຍເຖິງ ເຫດການໜຶ່ງທີ່ປາກົດຂຶ້ນ ນັບແຕ່ເວລາກ້ອງຖ່າຍເລີ່ມບັນທຶກ ຈົນຮອດເວລາເຊົາບັນທຶກ;

7. **ສື່** ໝາຍເຖິງ ພາຫະນະໜຶ່ງທີ່ນຳເອົາຂໍ້ມູນ ຂ່າວສານ ໃຫ້ໄປເຖິງ ຜູ້ເບິ່ງ, ຜູ້ຊົມ;

8. **ການຜະລິດຮູບເງົາ** ໝາຍເຖິງ ຂັ້ນຕອນໃນການສ້າງຮູບເງົາ ຊຶ່ງປະກອບ ມີ ສາມໄລຍະ ຄື ໄລຍະກະກຽມ, ໄລຍະຖ່າຍທຳ ແລະ ໄລຍະຜະລິດທີ່ສົມບູນ;

9. **ການສາຍຮູບເງົາເຄື່ອນທີ່** ໝາຍເຖິງ ການນຳເອົາຜະລິດຕະພັນຮູບເງົາໄປສາຍຢູ່ສະຖານທີ່ຕ່າງໆ ທີ່ບໍ່ແມ່ນໂຮງຮູບເງົາ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຮູບເງົາ**

ລັດ ສົ່ງເສີມ ການພັດທະນາວຽກງານຮູບເງົາ ໃຫ້ມີການຂະຫຍາຍຕົວ ແລະ ມີຄວາມເຂັ້ມແຂງ ທັງປະລິມານ ແລະ ຄຸນນະພາບ ດ້ວຍການ ປະກອບບຸກຄະລາກອນ, ສະໜອງງົບປະມານ ແລະ ພາຫະນະ, ວັດຖຸປະກອນເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ.

ລັດ ປຸກລະດົມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເສີມຂະຫຍາຍພອນສະຫວັນ ໃນການປະດິດຄິດແຕ່ງ, ສະແດງ ແລະ ສ້າງຮູບເງົາ ເພື່ອຮັບໃຊ້ພາຍໃນ ແລະ ສົ່ງອອກຜະລິດຕະພັນຮູບເງົາລາວ ພ້ອມທັງຮັບເອົາຮູບເງົາອັນໂດດເດັ່ນຂອງ ພາກພື້ນ ແລະ ສາກົນຢ່າງມີການເລືອກເຟັ້ນ.

ລັດ ຊຸກຍູ້ ແລະ ສົ່ງເສີມໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດລົງທຶນເຂົ້າໃນວຽກງານຮູບເງົາ ດ້ວຍການ ສ້າງສະຖານການສຶກສາ, ສ້າງວິຊາຊີບ, ຄົ້ນຄວ້າປະດິດສ້າງໃຫ້ມີຄວາມອຸດົມຮັ່ງມີ, ຫຼາຍຮູບຫຼາຍສີ, ເປັນເຈົ້າການ ແລະ ມີສ່ວນຮ່ວມໃນການຟື້ນຟູ, ພັດທະນາ, ເຜີຍແຜ່ ແລະ ເຮັດໃຫ້ວຽກງານຮູບເງົາກາຍເປັນອຸດສາຫະກຳ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານຮູບເງົາ**

ການເຄື່ອນໄຫວວຽກງານຮູບເງົາ ໃຫ້ປະຕິບັດຕາມຫຼັກການພື້ນຕໍ່ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ກົດໝາຍ, ມູນເຊື້ອວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ;

2. ຮັບປະກັນ ລັກສະນະຊາດ, ມະຫາຊົນ ແລະ ລັກສະນະກ້າວໜ້າ ໄປຄຽງຄູ່ກັບການສຶກສາອົບຮົມພົນລະເມືອງລາວ ໃຫ້ມີນ້ຳໃຈຮັກຊາດ, ມີຄວາມສາມັກຄີປອງດອງ;

3. ຮັບປະກັນການມີສ່ວນຮ່ວມຂອງປະຊາຊົນ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

4. ຮັບປະກັນການຜະລິດຮູບເງົາໃຫ້ທັນສະໄໝ;

5. ປົກປັກຮັກສາຜະລິດຕະພັນຮູບເງົາ ໃຫ້ຖືກຕ້ອງຕາມເຕັກນິກ ແລະ ມາດຕະຖານສາກົນ.

**ມາດຕາ 6 ສິດ ແລະ ພັນທະຂອງພົນລະເມືອງກ່ຽວກັບຮູບເງົາ**

ພົນລະເມືອງ ມີສິດດຳເນີນກິດຈະການກ່ຽວກັບຮູບເງົາ, ຮັບຊົມຮູບເງົາ, ມີຄຳເຫັນຕໍ່ເນື້ອໃນຮູບເງົາ ແລະ ມີພັນທະປະກອບສ່ວນ, ໃຫ້ຄວາມຮ່ວມມືໃນການຄຸ້ມຄອງ, ປົກປັກຮັກສາ, ຟື້ນຟູ, ສົ່ງເສີມ ແລະ ພັດທະນາວຽກງານຮູບເງົາ.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວວຽກງານຮູບເງົາ ຢູ່ ສປປ ລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຮູບເງົາ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກວິທະຍາສາດ, ເຕັກໂນໂລຊີ, ບຳລຸງສ້າງບຸກຄະລາກອນ, ການເຂົ້າຮ່ວມງານວາງສະແດງ, ການແຂ່ງຂັນ, ງານມະໂຫລານຮູບເງົາ ແລະ ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ປະເພດ ແລະ ລັກສະນະຮູບເງົາ
### ໝວດທີ 1
### ປະເພດຮູບເງົາ

**ມາດຕາ 9 ປະເພດຮູບເງົາ**

ຮູບເງົາ ມີ ສີ່ປະເພດ ດັ່ງນີ້:

1. ຮູບເງົາເອກະສານ;
2. ຮູບເງົາສາລະຄະດີ;
3. ຮູບເງົາເລື່ອງ;
4. ຮູບເງົາກາຕູນ.

**ມາດຕາ 10 ຮູບເງົາເອກະສານ**

ຮູບເງົາເອກະສານ ແມ່ນ ຮູບເງົາກ່ຽວກັບເຫດການໃດໜຶ່ງ ທີ່ສະເໜີ ຂໍ້ມູນ ຂ່າວສານ ແລະ ການເຄື່ອນໄຫວຕ່າງໆ ເປັນຕົ້ນ ກອງປະຊຸມໃຫຍ່, ການເຄື່ອນໄຫວຂອງຜູ້ນໍາ ເພື່ອໃຫ້ມວນຊົນໄດ້ຮັບຮູ້ຕາມຄວາມເປັນຈິງ.

**ມາດຕາ 11 ຮູບເງົາສາລະຄະດີ**

ຮູບເງົາສາລະຄະດີ ແມ່ນ ຮູບເງົາກ່ຽວກັບເຫດການໃດໜຶ່ງທີ່ສະເໜີ ຂໍ້ມູນ ຂ່າວສານ ແລະ ການເຄື່ອນໄຫວຕ່າງໆ ເຊັ່ນ ສາລະຄະດີທາງດ້ານ ເສດຖະກິດ, ວັດທະນະທໍາ-ສັງຄົມ, ປະຫວັດສາດ, ວິທະຍາສາດ, ທໍາມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ.

**ມາດຕາ 12 ຮູບເງົາເລື່ອງ**

ຮູບເງົາເລື່ອງ ແມ່ນ ຮູບເງົາທີ່ສັງລວມເອົາສິລະປະປະເພດຕ່າງໆ ດ້ວຍການສະແດງເປັນເລື່ອງຄ້າຍຄືຄວາມຈິງ ຊຶ່ງ ມີ ດັ່ງນີ້:

1. ຮູບເງົາເລື່ອງຊີວິດ;
2. ຮູບເງົາເລື່ອງຕໍ່ສູ້;
3. ຮູບເງົາເລື່ອງຄວາມຮັກ;
4. ຮູບເງົາເລື່ອງສະຫຍອງຂວັນ;
5. ຮູບເງົາເລື່ອງສືບສວນ-ສອບສວນ;
6. ຮູບເງົາເລື່ອງຜະຈົນໄພ;
7. ຮູບເງົາເລື່ອງວິທະຍາສາດ;
8. ຮູບເງົາເລື່ອງຈິນຕະນາການ;
9. ຮູບເງົາເລື່ອງຕະຫຼົກ;
10. ຮູບເງົາເລື່ອງບົດເພງ;
11. ຮູບເງົາເລື່ອງອື່ນໆ.

**ມາດຕາ 13 ຮູບເງົາກາຕູນ**

ຮູບເງົາກາຕູນ ແມ່ນ ຮູບເງົາກ່ຽວກັບ ຮູບແຕ້ມ ແລະ ຫຸ່ນຈໍາລອງ ໂດຍຜ່ານຂະບວນການຖ່າຍທໍາ, ຕັດຕໍ່ ທີ່ນໍາໃຊ້ເຕັກນິກ ແລະ ເອເລັກໂຕຣນິກທີ່ທັນສະໄໝ.

## ໝວດທີ 2
## ລັກສະນະຮູບເງົາ

**ມາດຕາ 14 ຮູບເງົາທີ່ມີລັກສະນະຊາດ**

ຮູບເງົາທີ່ມີລັກສະນະຊາດ ແມ່ນ ຮູບເງົາທີ່ສ່ອງແສງເຖິງມູນເຊື້ອວັດທະນະທຳ, ຮີດຄອງປະເພນີ ແລະ ວິຖີຊີວິດທີ່ເປັນເອກະລັກ ຂອງຊາດ, ຂອງເຜົ່າ.

**ມາດຕາ 15 ຮູບເງົາທີ່ມີລັກສະນະມະຫາຊົນ**

ຮູບເງົາທີ່ມີລັກສະນະມະຫາຊົນ ແມ່ນ ຮູບເງົາທີ່ສ່ອງແສງເຖິງການເສີມຂະຫຍາຍຄຸນຄ່າທາງດ້ານປະຫວັດສາດ ແລະ ວັດທະນະທຳຂອງຊາດ ຊຶ່ງມະຫາຊົນເປັນຜູ້ສ້າງ, ຊົມໃຊ້, ມີສ່ວນຮ່ວມໃນການປົກປັກຮັກສາ, ເສີມຂະຫຍາຍ, ມີບົດບາດສຳຄັນໃນການສ້າງຄວາມຮັກແພງ, ສາມັກຄີປອງດອງ, ປົກປັກຮັກສາທຳມະຊາດ, ສ້າງຄວາມຮັກ, ຄວາມຫວັງ ແລະ ຄວາມເບີກບານມ່ວນຊື່ນ.

**ມາດຕາ 16 ຮູບເງົາທີ່ມີລັກສະນະກ້າວໜ້າ**

ຮູບເງົາທີ່ມີລັກສະນະກ້າວໜ້າ ແມ່ນ ຮູບເງົາທີ່ສ່ອງແສງໃຫ້ເຫັນເຖິງການເສີມຂະຫຍາຍຄຸນຄ່າຂອງວັດທະນະທຳຂອງຊາດ ສົມທົບກັບການຮັບເອົາຄຸນຄ່າວັດທະນະທຳອັນດີງາມຂອງມວນມະນຸດ ຢ່າງມີການເລືອກເຟັ້ນ, ສອດຄ່ອງກັບ ແນວທາງ ນະໂຍບາຍ, ກົດໝາຍ, ຕຳນິວິຈານປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມ, ຕອບຕ້ານຖ້ອຍທຳນອງທີ່ບິດເບືອນ ແລະ ໃສ່ຮ້າຍປ້າຍສີ ທີ່ສ້າງຄວາມເສື່ອມເສຍຕໍ່ຜົນປະໂຫຍດຂອງຊາດ ແລະ ປະຊາຊົນ.

## ພາກທີ III
## ການຂໍອະນຸຍາດ ຜະລິດ, ເຜີຍແຜ່ ແລະ ການສຳເນົາຮູບເງົາ
## ໝວດທີ 1
## ການຂໍອະນຸຍາດຜະລິດຮູບເງົາ

**ມາດຕາ 17 ການຂໍອະນຸຍາດຜະລິດຮູບເງົາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ພາຍໃນປະເທດ ທີ່ມີຈຸດປະສົງຜະລິດຮູບເງົາ ໃຫ້ຍື່ນຄຳຮ້ອງພ້ອມດ້ວຍເນື້ອໃນບົດຮູບເງົາ, ບົດຖ່າຍທຳຮູບເງົາ ຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອກວດກາ ແລະ ອະນຸຍາດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ຕ່າງປະເທດ ທີ່ມີຈຸດປະສົງຜະລິດຮູບເງົາ ຢູ່ ສປປ ລາວ ໃຫ້ຍື່ນຄຳຮ້ອງ ພ້ອມດ້ວຍເນື້ອໃນບົດຮູບເງົາ, ບົດຖ່າຍທຳຮູບເງົາ ແລະ ເອກະສານອື່ນທີ່ກ່ຽວຂ້ອງຕໍ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອກວດກາ ແລະ ອະນຸຍາດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ຕ່າງປະເທດ ທີ່ມີຈຸດປະສົງຜະລິດຮູບເງົາກ່ຽວກັບປະເທດລາວ ໃຫ້ຍື່ນຄຳຮ້ອງ ພ້ອມດ້ວຍເນື້ອໃນບົດຮູບເງົາ, ບົດຖ່າຍທຳຮູບເງົາ ແລະ ເອກະສານອື່ນທີ່ກ່ຽວຂ້ອງຜ່ານສະ

ຖານທູດ ຫຼື ສະຖານກົງສຸນ ຂອງ ສປປ ລາວ ປະຈຳຢູ່ປະເທດທີ່ກ່ຽວຂ້ອງ ເພື່ອນຳສະເໜີຕໍ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂອງ ສປປ ລາວ ພິຈາລະນາ.

ສຳລັບເນື້ອໃນຮູບເງົາກ່ຽວກັບ ສປປ ລາວ ແລະ ສະຖານທີ່ຖ່າຍທຳໃນ ສປປ ລາວ ທີ່ພົວພັນກັບຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ປະສານສົມທົບກັບ ພາກສ່ວນດັ່ງກ່າວ ເພື່ອກວດກາ ແລະ ອະນຸຍາດ.

ເນື້ອໃນບົດຮູບເງົາ ແລະ ບົດຖ່າຍທຳຮູບເງົາ ທີ່ເປັນພາສາຕ່າງປະເທດຕ້ອງແປເປັນພາສາລາວ.

### ມາດຕາ 18 ການແຈ້ງຜົນງານຮູບເງົາ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານຮູບເງົາ ຫຼັງຈາກໄດ້ຮັບການຢັ້ງຢືນຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແລ້ວ ໃຫ້ແຈ້ງຜົນງານດັ່ງກ່າວ ຕໍ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອເປັນຫຼັກຖານ ແລະ ປົກປ້ອງລິຂະສິດກ່ຽວກັບຜົນງານດັ່ງກ່າວຕາມກົດໝາຍ.

## ໝວດທີ 2
## ການຂໍອະນຸຍາດເຜີຍແຜ່ຮູບເງົາ

### ມາດຕາ 19 ການຂໍອະນຸຍາດເຜີຍແຜ່ຮູບເງົາ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຈຸດປະສົງເຜີຍແຜ່ຮູບເງົາ ດ້ວຍການສາຍໃນໂຮງຮູບເງົາ, ສາຍຮູບເງົາເຄື່ອນທີ່, ສາຍຮູບເງົາໃນງານມະໂຫລານ, ເທດສະການ, ສັບປະດາ, ການແຂ່ງຂັນ, ງານວາງສະແດງຮູບເງົາ, ເຜີຍແຜ່ທາງໂທລະພາບ, ເຄືອຂ່າຍອິນເຕີເນັດ ແລະ ຮູບແບບອື່ນຢູ່ພາຍໃນ ແລະ ຕ່າງປະເທດ ຕ້ອງໄດ້ຂໍອະນຸຍາດນຳຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມການແບ່ງຂັ້ນຄຸ້ມຄອງ.

ຮູບເງົາຕ່າງປະເທດ ທີ່ນຳມາເຜີຍແຜ່ ຕ້ອງພາກເປັນພາສາລາວ ຫຼື ແປເປັນພາສາລາວຢູ່ໃນໜ້າຈໍຮູບເງົາ, ຍົກເວັ້ນຮູບເງົາເອກະສານ, ສາລະຄະດີ ດ້ານວິຊາການ, ເຕັກນິກ ວິທະຍາສາດ ແລະ ຕຳລາຮຽນພາສາຕ່າງປະເທດ.

ສຳລັບການສາຍຮູບເງົາຢູ່ໃນໂຮງຮູບເງົາ ຕ້ອງເປີດເພງຊາດລາວໃຫ້ຜູ້ຊົມຢືນເຄົາລົບທຸກ ກ່ອນສາຍບໍລິການ.

### ມາດຕາ 20 ການບໍລິການຮູບເງົາ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຈຳໜ່າຍ, ບໍລິການສາຍຮູບເງົາ ຫຼື ໃຫ້ການບໍລິການອື່ນກ່ຽວກັບຮູບເງົາ ຢູ່ ສປປ ລາວ ຕ້ອງໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດ ແລະ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 21 ການກຳນົດອາຍຸຜູ້ຊົມຮູບເງົາ**

ການກຳນົດອາຍຸຜູ້ຊົມຮູບເງົາ ມີ ດັ່ງນີ້:

1. ຜູ້ຊົມໂດຍບໍ່ຈຳກັດອາຍຸ ສາມາດຊົມຮູບເງົາທີ່ມີເນື້ອໃນ ບໍ່ຮຸນແຮງ, ມີສາລະໃຫ້ຄວາມຮູ້ ແລະ ສ້າງສັນບັນເທີງ;

2. ຜູ້ຊົມທີ່ມີອາຍຸ ສິບສາມປີ ລົງມາ ສາມາດຊົມຮູບເງົາທີ່ມີເນື້ອໃນທີ່ມີຄວາມຮຸນແຮງບໍ່ຫຼາຍ ແຕ່ຕ້ອງມີຜູ້ປົກຄອງ ຫຼື ຜູ້ຊົມທີ່ມີອາຍຸ ສິບແປດປີ ຂຶ້ນໄປ ໃຫ້ຄຳແນະນຳສິ່ງໃດຜິດສິ່ງໃດຖືກ ແລະ ສິ່ງໃດຄວນເຊື່ອ ຫຼື ບໍ່ຄວນເຊື່ອ;

3. ຜູ້ຊົມທີ່ມີອາຍຸເກີນກວ່າ ສິບສາມປີ ຫາ ຕໍ່າກວ່າ ສິບແປດປີ ສາມາດຊົມຮູບເງົາທີ່ມີເນື້ອໃນຄວາມຮຸນແຮງຫຼາຍກວ່າຂໍ້ສອງ, ມີສາກກ່ຽວກັບຄວາມສຳພັນທາງເພດທີ່ ບໍ່ເປີດເຜີຍ, ບໍ່ເປີດແປນ, ມີການຕໍ່ສູ້ກັນແຕ່ບໍ່ເຖິງຂັ້ນໂຫດຮ້າຍປ່າເຖື່ອນຈົນເກີນໄປ;

4. ຜູ້ຊົມທີ່ມີອາຍຸແຕ່ ສິບແປດປີ ຂຶ້ນໄປ ສາມາດຊົມຮູບເງົາໄດ້ທຸກປະເພດ ລວມທັງຮູບເງົາທີ່ມີເນື້ອໃນຮຸນແຮງ, ໂຫດຮ້າຍ, ມີສາກກ່ຽວກັບຄວາມສຳພັນທາງເພດ.

ສັນຍາລັກສຳລັບອາຍຸຜູ້ຊົມຮູບເງົາໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 22 ການຂໍອະນຸຍາດສົ່ງອອກ-ນຳເຂົ້າຮູບເງົາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສົ່ງອອກ-ນຳເຂົ້າຮູບເງົາເພື່ອເຜີຍແຜ່ ຕ້ອງໄດ້ຂໍອະນຸຍາດນຳຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ຮູບເງົາທີ່ຈະສົ່ງອອກ-ນຳເຂົ້າ ຕ້ອງມີເນື້ອໃນທີ່ ສ້າງສັນ, ບັນເທີງ, ໃຫ້ຄວາມຮູ້, ບໍ່ມີເນື້ອໃນທີ່ແຕະຕ້ອງເຖິງວັດທະນະທຳອັນດີງາມຂອງຊາດ, ຄວາມສາມັກຄີຂອງປະຊາຊົນລາວບັນດາເຜົ່າ ແລະ ປະເທດເພື່ອນມິດໃນໂລກ.

## ໝວດທີ 3
## ການສຳເນົາຮູບເງົາ

**ມາດຕາ 23 ການສຳເນົາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຜະລິດຮູບເງົາສຳເລັດສົມບູນ ແລະ ເຜີຍແຜ່ ສິບສອງເດືອນແລ້ວ ຕ້ອງມອບຕົ້ນສະບັບຜະລິດຕະພັນຮູບເງົາຂອງຕົນ ໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອສຳເນົາດ້ວຍການເກັບຮັກສາ, ຕິດຕາມກວດກາຄຸນນະພາບ, ສ້ອມແປງຟີມຮູບເງົາ ແລະ ຂຶ້ນບັນຊີໄວ້.

ສຳລັບຜະລິດຕະພັນຮູບເງົາເກົ່າ ຕ້ອງສຳເນົາດ້ວຍການຄັດເລືອກເນື້ອໃນ ແລະ ຄຸນນະພາບ, ຟື້ນຟູຟີມຮູບເງົາທີ່ເປ່ເພ, ຈີກຂາດ, ຕິກໂມກ ໃຫ້ຄືນສູ່ສະພາບທີ່ສາມາດນຳໃຊ້ໄດ້ ແລະ ຂຶ້ນບັນຊີໄວ້.

**ມາດຕາ 24 ການເກັບຮັກສາ**

ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕ້ອງຄຸ້ມຄອງ ເກັບຮັກສາ ຜະລິດຕະພັນຮູບເງົາ ໃຫ້ຖືກຕ້ອງຕາມເຕັກນິກທີ່ທັນສະໄໝ ແລະ ມາດຕະຖານສາກົນ ເພື່ອໃຫ້ສາມາດນຳໃຊ້ໄດ້ຢ່າງຍາວນານ.

**ມາດຕາ 25 ການຕິດຕາມກວດກາຄຸນນະພາບ ແລະ ສ້ອມແປງຟິມຮູບເງົາ**

ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕ້ອງຕິດຕາມກວດກາຄຸນນະພາບຂອງຟິມຮູບເງົາທຸກໆ ສາມເດືອນ. ໃນກໍລະນີພົບເຫັນຟິມຮູບເງົາ ມີກິ່ນສົ້ມ, ຕິກໂມກ ຫຼື ເປ່ເພ ຕ້ອງມີການຟື້ນຄືນ ແລະ ສ້ອມແປງຟິມຮູບເງົານັ້ນ ໃຫ້ສາມາດນຳໃຊ້ໄດ້.

**ມາດຕາ 26 ການຂຶ້ນບັນຊີ**

ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕ້ອງຂຶ້ນບັນຊີດ້ວຍການບັນທຶກຊື່, ເນື້ອໃນຫຍໍ້, ຈັດປະເພດ, ລຳດັບຂໍ້ມູນ ກ່ຽວກັບການຜະລິດຮູບເງົາ ເຂົ້າໃນລະບົບຖານຂໍ້ມູນ.

ສຳລັບຮູບເງົາທີ່ບັນທຶກເຫດການ ແລະ ການເຄື່ອນໄຫວທີ່ມີຄຸນຄ່າອັນໂດດເດັ່ນທາງດ້ານປະຫວັດສາດ, ວັດທະນະທຳ ແລະ ທຳມະຊາດ ໃຫ້ພິຈາລະນາ ເພື່ອສະເໜີຂຶ້ນທະບຽນເປັນຄວາມຊົງຈຳຂອງໂລກ ລະດັບຊາດ, ພາກພື້ນ ແລະ ລະດັບໂລກ.

## ພາກທີ IV
## ຜູ້ສ້າງຮູບເງົາ ແລະ ນາມມະຍົດ
### ໝວດທີ 1
### ຜູ້ສ້າງຮູບເງົາ

**ມາດຕາ 27 ຜູ້ສ້າງຮູບເງົາ**

ຜູ້ສ້າງຮູບເງົາປະກອບ ມີ ຜູ້ອຳນວຍການສ້າງ, ຜູ້ກຳກັບຮູບເງົາ, ຜູ້ກຳກັບການຖ່າຍທຳ, ນັກຖ່າຍທຳ, ນັກຂຽນບົດຮູບເງົາ, ນັກສະແດງ, ຊ່າງແຕ່ງໜ້າ, ນັກຈັດສາກ, ນັກຈັດແສງສະຫວ່າງ, ນັກອັດສຽງ, ນັກກຳກັບສີນ, ນັກກຳກັບເຄື່ອງນຸ່ງນັກສະແດງ, ຜູ້ຮັບຜິດຊອບເຕັກນິກ, ຜູ້ບໍລິຫານກອງຖ່າຍ, ນັກອອກແບບກຣາຟິກຄອມພິວເຕີ, ນັກຕັດຕໍ່, ນັກຕົບແຕ່ງແສງສີ, ນັກແຕ່ງດົນຕີປະກອບຮູບເງົາ, ນັກພາກຮູບເງົາ ແລະ ອື່ນໆ.

ຜູ້ສ້າງຮູບເງົາຕ້ອງມີບັດໃນການເຄື່ອນໄຫວວຽກງານຮູບເງົາ.

**ມາດຕາ 28 ຈັນຍາບັນຂອງຜູ້ສ້າງຮູບເງົາ**

ຜູ້ສ້າງຮູບເງົາຕ້ອງມີຈັນຍາບັນ ດັ່ງນີ້:

1. ມີແນວຄິດສ້າງສັນ, ບໍ່ຂັດກັບ ແນວທາງ ນະໂຍບາຍ, ກົດໝາຍ, ຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຊາດ, ຂອງເຜົ່າ;
2. ມີການປະພຶດ ແລະ ເປັນແບບຢ່າງທີ່ດີໃຫ້ແກ່ສັງຄົມ;

3. ຮັກອາຊີບ, ຊື່ສັດຕໍ່ເວລາ, ນັບຖືການຈັດຕັ້ງທີ່ກ່ຽວຂ້ອງ;

4. ຮູ້ເຄົາລົບໃຫ້ກຽດ ບຸກຄົນ, ເພື່ອນຮ່ວມງານ ແລະ ສະຖານທີ່ກ່ຽວຂ້ອງ.

**ມາດຕາ 29 ຄວາມຮັບຜິດຊອບຂອງຜູ້ສ້າງຮູບເງົາ**

ຜູ້ສ້າງຮູບເງົາ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຜູ້ອໍານວຍການສ້າງ ຄວບຄຸມ ແລະ ບັນຊາ ໂດຍກົງຮອບດ້ານ ໃນຂະບວນການຜະລິດຮູບເງົາແຕ່ຕົ້ນຈົນສໍາເລັດຜົນ;

2. ຜູ້ກໍາກັບຮູບເງົາ ສ້າງຄວາມເຂົ້າໃຈບົດຮູບເງົາ, ເລືອກທີມງານເຕັກນິກ, ນັກສະແດງ, ສະຖານທີ່ຖ່າຍທໍາ ແລະ ເປັນຜູ້ຄວບຄຸມການຜະລິດຮູບເງົາທັງໝົດ;

3. ຜູ້ກໍາກັບການຖ່າຍທໍາ ສ້າງຄວາມເຂົ້າໃຈບົດຮູບເງົາ ແລະ ມູມກ້ອງ ເພື່ອອໍານວຍການໃນການຖ່າຍທໍາໃຫ້ແກ່ນັກຖ່າຍທໍາ;

4. ນັກຖ່າຍທໍາ ຄວບຄຸມບັນຊາກ້ອງຖ່າຍ ໂດຍປະສານມູມກ້ອງກັບຜູ້ກໍາກັບຖ່າຍທໍາຮູບເງົາ;

5. ນັກຂຽນບົດຮູບເງົາ ຄົ້ນຄິດ, ປະດິດແຕ່ງ ແລະ ຂຽນບົດດ້ວຍຕົນເອງ ຫຼື ນໍາເອົາບົດປະພັນຕ່າງໆຂອງຜູ້ອື່ນທີ່ໄດ້ຮັບອະນຸຍາດ ມາຂຽນເປັນບົດຮູບເງົາ;

6. ນັກສະແດງ ເປັນຕົ້ນ ພະເອກ, ນາງເອກ, ຜູ້ສະແດງປະກອບ ມີໜ້າທີ່ສະແດງຕາມບົດບາດ, ອາລົມຈິດຂອງຕົວລະຄອນ ຕາມເນື້ອໃນເລື່ອງ ແລະ ຄວາມຕ້ອງການຂອງຜູ້ກໍາກັບການສະແດງ;

7. ຊ່າງແຕ່ງໜ້າ ສ້າງຄວາມເຂົ້າໃຈບົດຮູບເງົາ ແລະ ບົດບາດຂອງນັກສະແດງຮູບເງົາ ແລ້ວແຕ່ງໜ້ານັກສະແດງໃຫ້ເຂົ້າກັບບົດບາດ ແລະ ບົດຮູບເງົາ;

8. ນັກຈັດສາກ ຈັດຫາອຸປະກອນປະກອບ ພາບ, ສາກ, ສິລະປະ ຕາມການອອກແບບຂອງຜູ້ກໍາກັບການຖ່າຍທໍາ;

9. ນັກຈັດແສງສະຫວ່າງ ສ້າງຄວາມເຂົ້າໃຈບົດຮູບເງົາ, ເນື້ອໃນຂອງແຕ່ລະສາກ ແລະ ອາລົມຂອງຕົວລະຄອນ ເພື່ອຈັດແສງໃຫ້ເຂົ້າກັບເນື້ອໃນ ແລະ ອາລົມຂອງຕົວລະຄອນ;

10. ນັກອັດສຽງ ຄົ້ນຄວ້າ, ຮິບໂຮມ ແລະ ບັນທຶກສຽງຢູ່ໃນສະຖານທີ່ຖ່າຍທໍາ ແລະ ຫ້ອງອັດສຽງ ເພື່ອຮັບໃຊ້ເນື້ອໃນ ແລະ ເຫດການຂອງຮູບເງົາ;

11. ນັກກໍາກັບສິນ ສ້າງຄວາມເຂົ້າໃຈບົດຮູບເງົາ ແລະ ສາກຕ່າງໆ ເພື່ອຈັດສາກຂອງການສະແດງໃຫ້ເຂົ້າກັບບົດ ແລະ ຄວາມຕ້ອງການຂອງຜູ້ກໍາກັບການສະແດງ;

12. ນັກກໍາກັບເຄື່ອງນຸ່ງນັກສະແດງ ສ້າງຄວາມເຂົ້າໃຈບົດຮູບເງົາ ແລະ ລັກສະນະຂອງຕົວລະຄອນພ້ອມທັງຕິດຕາມການແຕ່ງກາຍຂອງນັກສະແດງ ໃຫ້ມີຄວາມຕໍ່ເນື່ອງຕາມເຫດການຂອງບົດຮູບເງົາ;

13. ຜູ້ຮັບຜິດຊອບເຕັກນິກ ສ້າງຄວາມເຂົ້າໃຈບົດຮູບເງົາ ແລະ ປະສານສົມທົບກັບຜູ້ກໍາກັບການສະແດງກ່ຽວກັບສາກ ແລະ ພາບຕ່າງໆ ທີ່ຈະຖ່າຍທໍາ ເພື່ອກະກຽມອຸປະກອນເຕັກນິກໃຫ້ເຂົ້າກັບຄວາມຕ້ອງການໃນການຖ່າຍທໍາແຕ່ລະພາບ ແລະ ສາກ;

14. ຜູ້ບໍລິຫານກອງຖ່າຍ ອໍານວຍຄວາມສະດວກໃຫ້ກອງຖ່າຍ ດ້ານການບໍລິຫານ, ການເດີນທາງ, ການກິນຢູ່ ແລະ ອື່ນໆ ຂອງກອງຖ່າຍທໍາ;

15. ນັກອອກແບບກຣາຟິກຄອມພິວເຕີ ອອກແບບພາບກຣາຟິກຕາມການແນະນຳ ແລະ ຄວາມຕ້ອງການຂອງຜູ້ກຳກັບການສະແດງ;

16. ນັກຕັດຕໍ່ຮູບເງົາ ເລືອກເຟັ້ນ ຮຽບຮຽງລຳດັບພາບໃຫ້ໄປຕາມເຫດການຂອງບົດເລື່ອງໂດຍການເຫັນດີຂອງຜູ້ກຳກັບການສະແດງ;

17. ນັກຕົບແຕ່ງແສງສີ ສ້າງຄວາມເຂົ້າໃຈບົດຮູບເງົາ ແລະ ອາລົມຂອງຮູບເງົາ ເພື່ອປັບແສງ ແລະ ສີຂອງຮູບເງົາໃນເວລາຕັດຕໍ່ ໃຫ້ເຂົ້າກັບຄວາມຕ້ອງການຂອງຜູ້ກຳກັບການສະແດງ.

18. ນັກແຕ່ງດົນຕີປະກອບຮູບເງົາ ປະພັນບົດເພງຮ້ອງ ແລະ ດົນຕີ ເພື່ອປະກອບໃສ່ຮູບເງົາຕາມເນື້ອໃນ ແລະ ອາລົມຂອງບົດຮູບເງົາ;

19. ນັກພາກຮູບເງົາ ສ້າງຄວາມເຂົ້າໃຈບົດຮູບເງົາ ແລະ ອາລົມຂອງຕົວລະຄອນ ແລ້ວພາກຮູບເງົາໃຫ້ເຂົ້າກັນກັບເນື້ອໃນ ແລະ ອາລົມຂອງຕົວລະຄອນ.

**ມາດຕາ 30 ການຂຶ້ນທະບຽນຜູ້ສ້າງຮູບເງົາ**

ຜູ້ສ້າງຮູບເງົາ ຕ້ອງໄດ້ຂຶ້ນທະບຽນນຳຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອອອກບັດເຄື່ອນໄຫວວຽກງານຮູບເງົາ.

ເອກະສານປະກອບໃນການຂໍຂຶ້ນທະບຽນ ມີ ດັ່ງນີ້:

1. ຄຳຮ້ອງຕາມແບບພິມທີ່ກຳນົດໄວ້;
2. ປະກາສະນີຍະບັດ ຫຼື ໃບຢັ້ງຢືນການຜ່ານງານດ້ານວິຊາສະເພາະທີ່ກ່ຽວຂ້ອງ;
3. ໃບຢັ້ງຢືນທີ່ຢູ່, ສຳເນົາ ສຳມະໂນຄົວ ຫຼື ບັດປະຈຳຕົວ;
4. ໃບແຈ້ງໂທດ;
5. ຮູບສີຂະໜາດ 3x4 ພື້ນສີຂາວ ສອງໃບ.

**ມາດຕາ 31 ການສົ່ງອອກ-ນຳເຂົ້າຜູ້ສ້າງຮູບເງົາ**

ການສົ່ງອອກ-ນຳເຂົ້າຜູ້ສ້າງຮູບເງົາ ເພື່ອຈຸດປະສົງ ແລກປ່ຽນທາງດ້ານວິຊາການ ຫຼື ດຳເນີນກິດຈະການກ່ຽວກັບຮູບເງົາຕ້ອງຂໍອະນຸຍາດນຳຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 32 ສິດຂອງຜູ້ສ້າງຮູບເງົາ**

ຜູ້ສ້າງຮູບເງົາ ມີສິດ ດັ່ງນີ້:

1. ຄົ້ນຄວ້າ ແລະ ສຶກສາຮຽນຮູ້ ເພື່ອຍົກລະດັບດ້ານການເມືອງ, ວັດທະນະທຳ ແລະ ວິຊາສະເພາະ;
2. ຄົ້ນຄວ້າ, ປະດິດແຕ່ງ ແລະ ສະແດງຜົນງານຂອງຕົນທີ່ໄດ້ຮັບອະນຸຍາດ;
3. ແຈ້ງຜົນງານຮູບເງົາຂອງຕົນ ແລະ ໄດ້ຮັບການປົກປ້ອງລິຂະສິດຕາມກົດໝາຍ;
4. ເຄື່ອນໄຫວ ແລະ ດຳເນີນທຸລະກິດ ກ່ຽວກັບຮູບເງົາທີ່ຖືກຕ້ອງຕາມກົດໝາຍ;
5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.